ທະນາຄານຮ່ວມພັດທະນາ ມະຫາຊົນ

ເລກທີ 096 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 16 ມິຖຸນາ 2026

ມະຕິ
ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ
ສະໄໝວິສາມັນ ຄັ້ງທີ II, ປະຈຳປີ 2026

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດຫຼັກຊັບ ແລະ ບໍລິສັດ ຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ ສະບັບເລກທີ 064/ທຄຮ, ລົງວັນທີ 5 ມີນາ 2026.

ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ສະໄໝວິສາມັນ ຄັ້ງທີ II ປະຈຳປີ 2026 (ຕໍ່ໄປນີ້ຮຽກວ່າ: ກອງປະຊຸມ), ໄດ້ເປີດຂຶ້ນ ໃນເວລາ: 15:00 ໂມງ, ຂອງວັນທີ 16 ມິຖຸນາ 2026, ທີ່ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ, ໂດຍການເປັນປະທານຂອງ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ ໂດຍມີສະມາຊິກສະພາບໍລິຫານ ຈຳນວນ 8 ທ່ານ ເຂົ້າຮ່ວມ. ຜ່ານການຄົ້ນຄວ້າ ແລະ ແລກປ່ຽນຄຳເຫັນຂອງບັນດາ ສະມາຊິກສະພາບໍລິຫານ ຢ່າງເລິກເຊິ່ງ, ບັນດາສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ໄດ້ຕົກລົງເປັນເອກະພາບ ຕໍ່ແຕ່ລະວາລະຂອງກອງປະຊຸມ ດັ່ງນີ້:

ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ມີມະຕິຕົກລົງ ດັ່ງນີ້:

ມາດຕາ 1 ມະຕິຕົກລົງ ສຳລັບການເພີ່ມທຶນຈົດທະບຽນ ໂດຍການນຳໃຊ້ສ່ວນເພີ່ມມູນຄ່າຮຸ້ນ ເພື່ອອອກຮຸ້ນລາງວັນໃນຄັ້ງນີ້ ອາດຈະມີຄວາມສ່ຽງ ແລະ ຜົນກະທົບບາງປະການ ດັ່ງຕໍ່ໄປນີ້:

1. ຜົນກະທົບຕໍ່ສິດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນ
- ສິດຂອງຜູ້ຖືຮຸ້ນ ຍັງຄົງເໝືອນເດີມ ເນື່ອງຈາກການເພີ່ມທຶນ ໂດຍການນຳໃຊ້ສ່ວນເພີ່ມມູນຄ່າຮຸ້ນ (Share premium) ບໍ່ມີການປ່ຽນແປງສັດສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນ;
- ຜູ້ຖືຮຸ້ນ ໄດ້ຮັບຮຸ້ນເພີ່ມຂຶ້ນຕາມສັດສ່ວນ ໂດຍບໍ່ມີການລົງທຶນຊື້ຮຸ້ນເພີ່ມ.

2. ຄວາມສ່ຽງ ແລະ ຜົນກະທົບຕໍ່ອັດຕາສ່ວນທາງການເງິນ
- ເຮັດໃຫ້ອັດຕາສ່ວນ ກຳໄລຕໍ່ຮຸ້ນ (Earning per share: EPS) ຫຼຸດລົງ;
- ເຮັດໃຫ້ມູນຄ່າທາງບັນຊີຕໍ່ຮຸ້ນ (Book value per share: BVS) ຫຼຸດລົງ;

3. ຄວາມສ່ຽງຕໍ່ລາຄາຮຸ້ນໃນຕະຫຼາດ
ລາຄາຮຸ້ນພາຍຫຼັງຮຸ້ນລາງວັນຈົດທະບຽນ ຈະປັບຫຼຸດລົງ ຕາມຈຳນວນຮຸ້ນທີ່ເພີ່ມຂຶ້ນ ແຕ່ລາຄາຕົວຈິງອາດຈະປ່ຽນແປງຕາມພາວະຕະຫຼາດ ແລະ ຄວາມເຊື່ອໝັ້ນຂອງຜູ້ລົງທຶນ.

ເລກທີ 82 ຖະໜົນ ລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, 01000, ສປປ ລາວ ໂທ.(+856-21) 213531-6
ສາຍດ່ວນ: 1499, WEBSITE:WWW.JDBBANK.COM.LA; EMAIL:INFO@JDBBANK.COM.LA

4. ເຫັນດີຮັບຮອງເອົາ ໄລຍະເວລາ ແລະ ກຳນົດການທີ່ສຳຄັນສຳລັບການອອກຮຸ້ນລາງວັນ ດັ່ງນີ້:
   - ມື້ອະສິດ ໄດ້ຮັບຮຸ້ນ ລາງວັນ (XD) ວັນທີ 03 ກໍລະກົດ 2026;
   - ມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດໄດ້ຮັບຮຸ້ນລາງວັນ ວັນທີ 06 ກໍລະກົດ 2026;
   - ມື້ແຈກຢາຍຮຸ້ນລາງວັນ: ວັນທີ 15 ກໍລະກົດ 2026.

ມາດຕາ 2 ການຈັດຕັ້ງປະຕິບັດ

ມອບໃຫ້ຄະນະອຳນວຍການ ທຄຮ ຈັດຕັ້ງປະຕິບັດມະຕິກອງປະຊຸມ ສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ໄດ້ຮັບຜົນດີ.

ມາດຕາ 3 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານກອງປະຊຸມ

ວິໄລ ສີພະພອນ